Washington State Department of Social & Health Services
Transforming lives

# ໃບແຈ້ງການກ່ຽວກັບການກວດເບິ່ງເບື້ອງຫລັງອີງຕາມລາຍມື
# Fingerprint-Based Background Check Notice

**ລາຍລະອຽດກ່ຽວກັບການກວດເບິ່ງເບື້ອງຫລັງອີງຕາມລາຍມືຂອງທ່ານ:**

1. ກົມສັງຄົມສົງເຄາະ ແລະ ສາທາລະນະສຸກ (Department of Social and Health Services) ບົ່ງໃຫ້ທ່ານເຮັດການກວດເບິ່ງເບື້ອງຫລັງ. ການກວດເບິ່ງເບື້ອງຫລັງອັນນີ້ໄດ້ຖືກບົ່ງໃຫ້ມີໂດຍກົດຫມາຍຂອງຣັດຫລາຍໆກົດຫມາຍ, ລວມທັງກົດຫມາຍ RCW 43.43.837.
2. ລາຍມືຂອງທ່ານຈະຖືກໃຊ້ເພື່ອຈະກວດເບິ່ງສຳນວນບັນທຶກປະວັດອາດສະຍາກັມທີ່ໄດ້ຖືກເກັບຮັກສາໄວ້ໂດຍກົມຕຳຣວດຂອງຣັດວໍຊິງຕັນ (Washington State Patrol) (WSP) ແລະ ຫ້ອງການສືບສວນຂອງຣັດຖະບານກາງ (Federal Bureau of Investigation) (FBI). ເມື່ອໃດການກວດເບິ່ງລາຍມືໄດ້ຖືກເຮັດແລ້ວ, ທ່ານຈະຂໍເອົາໃບໂກປີຂອງຜົນອອກມາຂອງການເບິ່ງເບື້ອງຫລັງຂອງທ່ານໄດ້ໂດຍການຂຽນປະກອບຄຳຮ້ອງຂໍເອົາໂກປີຂອງລາຍລະອຽດຂອງການກວດເບິ່ງເບື້ອງຫລັງ (Applicant Request for a Copy of Background Check Information) (DSHS 27-110).
3. ຖ້າຫາກວ່າທ່ານເຊື່ອວ່າຜົນອອກມາຂອງການເບິ່ງເບື້ອງຫລັງຂອງທ່ານບໍ່ຄົບຖ້ວນ ຫລື ຜິດພາດ, ທ່ານມີໂອກາດທີ່ຈະເຮັດໃຫ້ສຳເຣັດ ຫລື ຄັດຄ້ານຄວາມຖືກຕ້ອງແນ່ນອນຂອງລາຍລະອຽດຕາມທີ່ຖືກກ່າວຢູ່ຂ້າງລຸ່ມນີ້.

   a. ໃບແຈ້ງການກ່ຽວກັບຜົນອອກມາຂອງການກວດເບິ່ງເບື້ອງຫລັງຈະອະທິບາຍວ່າຈະດັດແປງລາຍລະອຽດໄດ້ແນວໃດຊຶ່ງຖືກເອົາໃຫ້ໂດຍແຫລ່ງລາຍງານຂອງ BCCU ທີ່ຖືກກ່າວຢູ່ຂ້າງລຸ່ມນີ້:

      - Applicant Self-Disclosure
      - Department of Corrections (DOC)
      - Department of Health (DOH)
      - Federal Bureau of Investigation (FBI)
      - Washington Courts
      - Washington State Patrol (WSP)
      - ການກະທຳທາງບໍ່ດີ: Aging and Long-Term Administration (ALTSA) / Resident and Client Protection Program; ALTSA / Adult Protective Services; Department of Children, Youth and Families (DCYF) / Child Protective Services

   b. ມັນມີສອງຫົນທາງທີ່ຈະດັດແປງລາຍລະອຽດຢູ່ໃນບັນທຶກການຊີ້ຕົວຂອງຫ້ອງການ FBI:

      - ຕິດຕໍ່ໄປຫາຫ້ອງການຂອງຣັດ ຫລື ຣັດຖະບານກາງ ຫລື ຫ້ອງການຕ່າງໆບ່ອນທີ່ເອົາລາຍລະອຽດໃຫ້ຫ້ອງການ FBI; ຫລື
      - ສົ່ງໃບຫນັງສືຄຳຮ້ອງຄັດຄ້ານໄປຫາພະແນກລາຍລະອຽດທາງດ້ານອາດສະຍາກັມຂອງ FBI (FBI's Criminal Justice Information Services) (CJIS) ໂດຍການຂຽນຫນັງສືໄປຫາທີ່ຢູ່ຂ້າງລຸ່ມນີ້:

        FBI CJIS Division
        Attention: SCU, Module D-2
        1000 Custer Hollow Road
        Clarksburg, WV 26306

   ໃບຫນັງສືຄຳຮ້ອງຂອງທ່ານໄປຫາຫ້ອງການ FBI ຈະຕ້ອງຊີ້ບອກຢ່າງແຈ່ມແຈ້ງລາຍລະອຽດທີ່ທ່ານຮູ້ສຶກວ່າບໍ່ຖືກຕ້ອງແນ່ນອນ ຫລື ບໍ່ຄົບຖ້ວນ ແລະ ຈະຕ້ອງລວມເອົາໃບອັດສຳນວນຂອງຫລັກຖານ ຫລື ເອກສານທີ່ມີຢູ່ຕ່າງໆຊຶ່ງອູ້ມຊູຄຳຮ້ອງຂອງທ່ານ. ຕົວຢ່າງວ່າ, ຖ້າຫາກວ່າລາຍລະອຽດກ່ຽວກັບສິ່ງທີ່ໄດ້ເກີດຂຶ້ນຕໍ່ຂໍກ່າວຫາອາດສະຍາກັມໃສ່ທ່ານນັ້ນບໍ່ຖືກຕ້ອງ ຫລື ຂາດເຂີນ, ທ່ານຈະສົ່ງການບັນທຶກຈາກສານ ຫລື ຫ້ອງການທີ່ພິພາກສາຄະດີນັ້ນມາໄດ້. ກຸ່ມທີ່ກ່ຽວຂ້ອງຈະຕິດຕໍ່ໄປຫາຫ້ອງການບ່ອນທີ່ເຫມາະສົມເພື່ອຈະພະຍາຍາມທີ່ຈະພິສູດ ຫລື ດັດແປງຂໍ€ຄວາມບັນທຶກທີ່ຖືກຄັດຄ້ານສຳລັບທ່ານ. ເມື່ອຫ້ອງການ FBI ໄດ້ຮັບການຕິດຕໍ່ເປັນທາງການແລ້ວຈາກຫ້ອງການທີ່ມີສິດອຳນາດກ່ຽວກັບເຣື່ອງນີ້, ຫ້ອງການ FBI ຈະທຳການປ່ຽນແປງທີ່ເຫມາະສົມ ແລະ ແຈ້ງບອກທ່ານກ່ຽວກັບຜົນອອກມາ. (ການດຳເນີນການອັນນີ້ໄດ້ຖືກບັນຣະຍາຍຢູ່ໃນກົດຫມາຍ 28 C.F.R. § 16.34.)

4. ຂໍ€ຄວາມຂອງກົດຫມາຍສິດທິສ່ວນຕົວຂອງຫ້ອງການສືບສວນຂອງຣັດຖະບານກາງ (FBI) ຈະມີໄວ້ໃຫ້ຢູ່ໃນແວບໄຊທ໌ຂອງ FBI ຢູ່ທີ່ https://www.fbi.gov/services/cjis/compact-council/privacy-act-statement.

**ໂດຍການເຊັນຊື່ໃສ່ໃບແຈ້ງການໃບນີ້ ຂ້າພະເຈົ້າຮັບຮູ້ວ່າ:**

ຂ້າພະເຈົ້າໄດ້ຮັບໃບໂກປີຂອງໃບແຈ້ງການໃບນີ້ຍອມວ່າຂ້າພະເຈົ້າໄດ້ຖືກບົ່ງໃຫ້ມີການກວດເບິ່ງເບື້ອງຫລັງອີງຕາມລາຍມື. ບຸກຄົນ ຫລື ອົງການທີ່ໄດ້ຮ້ອງຂໍເອົາການກວດເບິ່ງເບື້ອງຫລັງໄດ້ຖືກບົ່ງໃຫ້ເກັບຮັກສາໃບໂກປີຂອງໃບແຈ້ງການທີ່ຖືກເຊັນຊື່ໃສ່ແລ້ວໃບນີ້ເພື່ອເປັນບັນທຶກຂອງເຂົາເຈົ້າ ແລະ ເພື່ອຈະສົ່ງໃບແຈ້ງການສະບັບດັ້ງເດີມກັບຄືນໃຫ້ຂ້າພະເຈົ້າ. ຂ້າພະເຈົ້າຈະຖືກແຈ້ງບອກກ່ຽວກັບຜົນອອກມາຂອງການການກວດເບິ່ງເບື້ອງຫລັງຂອງຂ້າພະເຈົ້າເມື່ອບຸກຄົນນັ້ນ ຫລື ອົງການນັ້ນທີ່ໄດ້ຮ້ອງຂໍເອົາການກວດເບິ່ງເບື້ອງຫລັງ ໄດ້ຮັບຫນັງສືຂອງຜົນອອກມາຂອງການກວດລາຍມືຂັ້ນສຸດທ້າຍ.

| ລາຍເຊັນຂອງຜູ້ຮ້ອງຂໍ | ວັນທີ | ຊື່ຂຽນເປັນຕົວພິມ |
|---|---|---|
| | | |